# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 3 ມິຖຸນາ 2007 ( 6-3-2007 )

## ຍອມຮັບການດີ້ນຮົນກັບຄວາມບາບຂອງທ່ານ

**ຂໍ້ພຣະຄັມພີໃນບົດຮຽນ:** ພບຍ 1:6-8,26-33,42-46

**ຄໍາຖາມຂອງຊີວິດ:** ເປັນຫຍັງບາງຄັ້ງຂ້າພະເຈົ້າຈຶ່ງບໍ່ຮູ້ສຶກມີຄວາມພໍໃຈໃນເຣື່ອງຄວາມສໍາພັນກັບພຣະເຈົ້າ?

**ຄວາມຈິງໃນພຣະຄັມພີ:** ການບໍ່ຟັງຄວາມພຣະເຈົ້ານັ້ນມີຜົນສະທ້ອນໃນລະຍະສັ້ນ ແລະຍາວ ພ້ອມທັງເຮັດໃຫ້ການໃຊ້ຊີວິດໃນຄວາມເຊື່ອນັ້ນຈົມລົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ມີຄວາມສາມັກຄີທັມອັນເລິກເຊິ່ງຕໍ່ພຣະເຈົ້າໂດຍ:

- ຍອມຮັບຕໍ່ພຣະເຈົ້າວ່າທ່ານມີຄວາມດີ້ນຮົນກັບຄວາມບາບຂອງທ່ານ.
- ຮຽນຂໍອະພັຍບາບທີ່ທ່ານໄດ້ກະທໍານໍາພຣະເຈົ້າ ແລະຂໍການຊ່ອຍເຫລືອຈາກພຣະອົງໃນເຣື່ອງການຕ້ານທານຕໍ່ຄວາມບາບນັ້ນ.

ຢູ່ທີ່ຟາມເທິງພູຂອງພໍ່ເຖົ້າຂ້າພະເຈົ້າຊຶ່ງຫ່າງຈາກບ້ານທີ່ຂ້າພະເຈົ້າອາສັຍຢູ່ໃນເວລາຍັງເປັນເດັກປະມານ 45 ໄມ. ໃກ້ໆກັບບ້ານພໍ່ເຖົ້າຂ້າພະເຈົ້ານັ້ນ ອາກາດຊຸ່ມຍາມຝົນໄດ້ເຮັດຖນົນທີ່ເຄີຍເປັນຝຸ່ນນັ້ນການເປັນບອກເປັນຕົມໄປ. ພໍ່ຂອງຂ້າພະເຈົ້າໄດ້ນໍາໄປຕາມຮອຍທາງເກົ່າທີ່ຣົດກະບະໄດ້ທຽວຕາມທາງນັ້ນ, ແຕ່ວ່າຣົດ Studebaker ສີຟ້າຂອງຂ້າພະເຈົ້າໄດ້ຖືກລາກແກ່ຂຶ້ນຈາກຕົມເລື້ອຍໆ. ບໍ່ນານມານີ້ ພໍ່ຂອງຂ້າພະເຈົ້າກໍໄດ້ລູຍຕົມໄປເຮືອນຊາວບ້ານເພື່ອຂໍຄວາມຊ່ອຍເຫລືອ.

ທ່ານເຄີຍຮູ້ສຶກວ່າວິນຍານທ່ານຖືກຕົກຫລຸມຂີ້ຕົມບໍ່? ຄໍາຕລົກບູຮານໄດ້ເວົ້າວ່າ ພວກອິສຣາເອັນໄດ້ຫລົງທາງສີ່ສິບປີເພາະວ່າໂມເຊລືມຂໍແຜນທີ່ເສັ້ນທາງເດີນລ່ວງໜ້າ. ຄວາມຈິງແລ້ວເສັ້ນທາງຂອງພຣະເຈົ້ານັ້ນຈະແຈ້ງແລ້ວ ແຕ່ວ່າພວກອິສຣາເອັນນັ້ນບໍ່ໄດ້ຟັງຄວາມຕ່າງຫາກ. ຄົນລຸ້ນໃໝ່ປະຈຸບັນນີ້ໄປເຖິງແຜ່ນດິນນີ້ດ້ວຍຄວາມແມ່ນຢາກວ່າ. ບົດຮຽນນີ້ໄດ້ເບິ່ງໃຫ້ເຫັນເຖິງການສາຣະພາບຂອງໂມເຊເພື່ອການຟັງຄວາມ ແລະຈະຊ່ອຍພວກເຮົາໃຫ້ສັງເກດວ່າຕົນໄດ້ຕິດຕາມພຣະເຈົ້າດ້ວຍຄວາມຮັກອັນເລິກເຊິ່ງຫລືບໍ່.

## ສຶກສາພຣະຄັມພີ

### 1. ທ່ານຈະໄປບ່ອນທີ່ພຣະເຈົ້ານໍາພາໄປ ບໍ່? ( ພບຍ 1:6-8 )

ເຫມືອນດັ່ງອາປາລາຊຽນເປັນບໍຣິເວນພູເຂົາ ແລະພູມິດແຊວກໍເປັນຈອມພູສູງໃນນັ້ນ, ໂຮເຣັບກໍເປັນພູເຂົາ ແລະຈອມພູຊີນາຍກໍເປັນຈອມພູສູງໜ່ວຍນຶ່ງທີ່ພຣະເຈົ້າໄດ້ກະທໍາພຣະສັນຍາກັບຊາວອິສຣາເອັນ. ຄົນລຸ້ນນຶ່ງທີ່ບໍ່ໄດ້ໃຫ້ຄວາມໂຄຣົບນັບຖືພຣະເຈົ້າໃນເມືອງກາເດສໃນສີ່ສິບປີກ່ອນ ( ຣະຫວ່າງປີ 1446 ກ່ອນ ຄ.ສ.; ຈຊບ 13-14 ) ໄດ້ໃຊ້ຊີວິດເລ່ລ້ອນໃນທະເລຊາຍ, ແລະໃນທີ່ນັ້ນໄດ້ເກີດມີຄົນລຸ້ນນຶ່ງໄດ້ກາຍເປັນຄົນທີ່ເຕີບໃຫຍ່ຮູ້ສົມບູນແລ້ວ.

ຫລັງຈາກການອົພະຍົບໜີຈາກເອຢິບຫລາຍກວ່າສີ່ສິບປີ, ພວກອິສຣາເອັນໄດ້ຕັ້ງຄ້າຍພັກຕາມຝັ່ງຕາວັນຕົກຂອງແມ່ນໍ້າຈໍດາເນ. ໂມເຊໄດ້ຕັກເຕືອນຊາວອິສຣາເອັນເຖິງຄໍາສັ່ງຂອງພຣະເຈົ້າໃຫ້ຄົນລຸ້ນນັ້ນກ່ອນທີ່ຈະກັບເຂົ້າສູ່ການເດີນທາງຂອງພວກເຂົາໄປສູ່ແຜ່ນດິນແຫ່ງພຣະສັນຍາ. ພຣະທັມໃນຕອນນີ້ເຮັດໃຫ້ເຫັນພາບອັນຂຍາຍກວ້າງຂອງພຣະສັນຍາທີ່ໄດ້ໃຫ້ໄວ້ກັບອາບຣາຮາມ, ອີຊາກ, ແລະຢາໂຄບ ແລະເຊື້ອສາຍຫລັງຈາກພວກເພິ່ນມາ. ໄພ່ພົນ

ຂອງພຣະເຈົ້າຫາກໍກຳລັງໄດ້ເຂົ້າສູ່ພັນທະສັນຍາກັບພຣະເຈົ້າອີກໃໝ່ທີ່ພູຊີນາຍ. ໃນເທື່ອນີ້ພວກເຂົາຈະໄດ້ເຂົ້າຄອບຄອງແຜ່ນດິນອັນກວ້າງໃຫຍ່ທີ່ແຜ່ໄປຕາມຊາຍແດນຂອງເອຢິບ ລວມໄປເຖິງພູເຂົາຂອງປະເທດການາອານພາກກາງ ແລະຕົນພູເຂົາພາກຕາວັນຕົກທີ່ຕິດກັນໄປນັ້ນ ຈົນເຖິງເລບານອນຮອດແມ່ນ້ຳຢູຟເຣຕິສ. ຈົນບັດນີ້, ເນື່ອງຈາກການບໍ່ຟັງຄວາມອັນເນື່ອງມາດລຽນຕິດຂອງພວກອິສຣາເອັນ, ພຽງແຕ່ໃນເວລາອັນສັ້ນພາຍໃຕ້ການປົກຄອງຂອງກະສັດໂຊໂລໂມນ ( ຫລາຍກວ່າສີ່ຮ້ອຍປີໃນປະວັດສາດຂອງອິສຣາເອັນ ) ແຜ່ນດິນທີ່ເປັນກັມມະສິດຂອງອິສຣາເອັນກໍບໍ່ມີອັນໃດຂະຫຍາຍໄປເຖິງຂອບເຂດທີ່ວ່າມານັ້ນຈັກເທື່ອ.

ອິສຣາເອັນສາມາດຈະເລືອກເອົາການຕັ້ງຖິ່ນຖານຈາກດິນແດນຟາກຕາວັນອອກຂອງແມ່ນ້ຳຈໍດາເນ ທີ່ເຂົາເຄີຍໄດ້ຍຶດຄອງເອົາມາແລ້ວນັ້ນ ( ຈຊບ 22-32 ). ໂມເຊໄດ້ຕັກເຕືອນພວກເຂົາເຖິງເຣື່ອງມໍຣະດົກທັງຫມົດທີ່ພຣະເຈົ້າໄດ້ບອກວ່າຈະມອບໃຫ້ປູ່ຍ່າຕາຍາຍຂອງພວກເຂົາ. ເພິ່ນໄດ້ສລູບໂດຍສັງເຂບການເດີນທາງທີ່ພວກເພິ່ນໄດ້ປະເຊີນກັບມັນຢູ່. ເພິ່ນໄດ້ເນັ້ນເຖິງຊີວິດຂອງພວກເຂົານັ້ນບໍ່ໃຊ່ວ່າມັນເປັນພຽງແຕ່ເປັນເຣື່ອງລາວສັ້ນທີ່ຕິດຕໍ່ກັນໄປ ແຕ່ວ່າມັນເປັນການເດີນທາງໄປຕາມສູ່ພຣະປະສົງຂອງພຣະເຈົ້າທີ່ໄດ້ວາງໄວ້ໃຫ້ແລ້ວ.

ການປາກົດການອັນນຶ່ງຂອງຄວາມບາບນັ້ນແມ່ນເມື່ອຄົນທີ່ເຊື່ອໄດ້ເຄີຍຊີນກັບການຢູ່ທີ່ດ້ອຍກວ່າອັນທີ່ພຣະເຈົ້າຫວັງໄວ້ໃຫ້ເຂົານັ້ນ. ດ້ວຍການທີ່ເຫັນວ່າຊີວິດຄືການເດີນທາງໄປຕາມພຣະປະສົງຂອງພຣະເຈົ້າທີ່ມີຕໍ່ພວກເຮົາ, ແລ້ວພວກເຮົາຈຶ່ງຈະສົ່ງເສີມຄວາມປາຖນາຂອງຕົນເພື່ອຕິດຕາມໄປເຖິງທີ່ງພຣະເຈົ້າໄດ້ນຳພວກເຮົາໄປ. ພວກເຮົາຄວນຈະເບິ່ງໃຫ້ເຫັນຊີວິດຂອງພວກເຮົາບໍ່ໃຫ້ຕ່ຳໄປກວ່າການເດີນທາງຂອງຊາວອິສຣາເອັນ ແລະພຣະເຈົ້າກໍໄດ້ມີແຜນການຂອງພຣະອົງໃຫ້ພວກເຮົາແລ້ວ. ຖ້າເປັນດັ່ງນັ້ນ, ພວກເຮົາຈຶ່ງຄວນໃຫ້ຕົນມີຄວາມປາຖນາອັນແຮງກ້າເພື່ອໃຫ້ເປັນທີ່ພໍພຣະທັຍຂອງພຣະເຈົ້າໃນທຸກສິ່ງທີ່ພວກເຮົາໄດ້ກະທຳຢູ່. ພຣະເຈົ້າຕ້ອງການຢາກຈະໃຫ້ພວກທ່ານໄດ້ເຫັນພຣະອົງທຳງານໃນຖ້າມກາງພວກທ່ານ. ຜູ້ໃດທີ່ປາຖນາຢາກຈະເຫັນພຣະເຈົ້າທຳງານ ແລະໄດ້ຟັງຄວາມພຣະອົງໃນການເດີນທາງຂອງຊີວິດຈະໄດ້ພົບວ່າພຣະເຈົ້າໄດ້ໃຫ້ທິດທາງທີ່ແຈ້ງຊັດໃນແຜນການຂອງພຣະອົງໃນຊີວິດຂອງເຮົາ.

## 2. <u>ທ່ານໄດ້ຖືກຄອບຄຸມຈາກຄວາມທໍ້ຖອຍໃຈ ບໍ່?</u> ( ພບຍ 1:26-28 )

ໂມເຊໄດ້ກ່າວຄືນເຖິງຄວາມອັນຕະລາຍໃນການຂ້າມທະເລຊາຍ, ໃນການມາເຖິງເມືອງກາເດສ ( ບາງເທື່ອກໍຮ້ອງວ່າກາເດສ-ບາເນັຽ, ຊຶ່ງເປັນເຂດພາກໃຕ້ຂອງບໍຣິເວນພູເຂົາຢູດາຍ ) ແລະໄດ້ເລົ່າເຖິງການໃຫ້ກຳລັງໃຈຂອງເພິ່ນຕໍ່ພວກເຂົາໃຫ້ນັບຖືແລະຟັງຄວາມພຣະເຈົ້າ ( 1:19-21 ). ແທນທີ່ເຂົາຈະຟັງຄວາມພຣະເຈົ້າໃນທັນທີ, ພວກປະຊາຊົນໄດ້ມີຄວາມລັງເລໃຈ. ພວກປະຊາຊົນໄດ້ຮ້ອງຂໍນຳໂມເຊໃຫ້ສົ່ງນັກສືບສອດແນມອອກໄປສືບເບິ່ງກ່ອນ. ເຖິງພວກນັກສືບໄດ້ລາຍງານວ່າແຜ່ນດິນນັ້ນດີຫລາຍຈົບຫລາຍກໍຕາມ, ແຕ່ວ່າການລາຍງານຂອງນັກສືບສ່ວນຫລາຍໄດ້ບອກເຖິງເນື້ອທີ່ ແລະຄວາມສາມາດຂອງພົລເມືອງນັ້ນທີ່ມີຄວາມສາມາດແລະການປ້ອງກັນທີ່ດີເລີດ ລາຍງານນີ້ກໍເຮັດໃຫ້ປະຊາຊົນເຕັມໄປດ້ວຍຄວາມຢ້ານກົວ ແລະເກີດຄວາມທໍ້ຖອຍໃຈ. ພວກເຂົາກໍໄດ້ເລີ້ມຕົ້ນຈົ່ມກັນ. **ແຕ່ພວກເຈົ້າໄດ້ຂັດຂືນຄຳສັ່ງຂອງອົງພຣະເຈົ້າຂອງພວກເຈົ້າ ແລະບໍ່ຢາກເຂົ້າໄປໃນດິນແດນນັ້ນ. ພວກເຈົ້າໄດ້ຈົ່ມຕໍ່ກັນແລະກັນໃນຜ້າເຕັນ.**

ແມ່ນແຕ່ຄຣິສຕຽນທີ່ເຕີບໃຫຍ່ແລ້ວກໍຍັງເກີດຄວາມທໍ້ຖອຍໃຈ. ຖ້າພວກເຮົາໄດ້ມີຄວາມທໍ້ຖອຍໃຈແລ້ວ, ຄວາມກັງວົນກໍສາມາດຄອບຄຸມພວກເຮົາໄດ້. ພວກເຮົາກໍເລີ້ມເຫັນແຕ່ອຸປະສັກ ເລີຍໄດ້ຫລົງລືມອິດທິຣິດຂອງພຣະເຈົ້າໄປ. ພວກເຮົາໄດ້ກະທຳບາບດ້ວຍຄິດວ່າພຣະເຈົ້າໄດ້ລະຖິ້ມພວກເຮົາໄປເສັຽແລ້ວ, ຫລືໄດ້ຕົວະຕົນເອງກ່ຽວກັບພຣະລັກສະນະຂອງພຣະອົງ ( ເຊັ່ນພວກອິສຣາເອັນໄດ້ກະທຳມາແລ້ວ ). ພວກເຮົາໄດ້ຊອກຫາຄຳແກ້ຕົວເພື່ອໃຫ້ສອດຄ່ອງກັບໃຈມັກຂອງຕົນເອງ ແທນທີ່ຈະຕິດຕາມຫົນທາງຂອງພຣະເຈົ້າທີ່ໄດ້ເຮັດໄວ້ໃຫ້ພວກເຮົາແລ້ວ.

ພວກອິສຣາເອັນໄດ້ພົບຄຳແກ້ຕົວສຳລັບຄວາມຢ້ານກົວຂອງພວກເຂົາດ້ວຍຄຳເວົ້າທີ່ວ່າ: **ພວກເຮົາໄດ້ເຫັນພວກເຜົ່າອານາກີມຢູ່ທີ່ນັ້ນເຫມືອນກັນ.** ພວກອານາກີມເປັນພວກຄົນທີ່ມີຮູບຮ່າງໃຫຍ່ສູງ. ທ່ານເກືອບຈະໄດ້ຍິນຄຳສຳນວນຂອງພວກອິສຣາເອັນທີ່ເວົ້າວ່າ, "ເປັນຫຍັງຈຶ່ງບໍ່ມີຜູ້ໃດຕ້ອງການໃຫ້ພວກເຮົາເຂົ້າໄປໃນແຜ່ນດິນແຫ່ງພຣະ

ສັນຍາໃນເວລາດຽວນີ້. ເຖິງແມ່ນວ່າພວກຍັກໃຫຍ່ໄດ້ຢູ່ທີ່ນັ້ນກໍຕາມ!" ພວກອິສຣະເອັນໄດ້ລືມໄປຢ່າງງ່າຍໆວ່າ ພຣະເຈົ້າໄດ້ກະທຳເພື່ອພວກເຂົາແລ້ວໃນອະດີດ ແລະສັນຍາໃຫ້ກັບພວກເຂົາແລ້ວໃນອະນາຄົດ. ພວກເຮົາໄດ້ອອກມາຈາກຈຸດນັ້ນໄກຫລາຍແລ້ວແມ່ນບໍ່?

ພວກເຮົາຈະຮັກສາຕົນຈາກຄວາມບາບໄດ້ຢ່າງໃດເມື່ອຕົນຫາກລົ້ມລົງໃນຄວາມທໍ້ຖອຍໃຈແນວນັ້ນ? ກຸນແຈຂອງມັນກໍແມ່ນຕ້ອງສັດຊື່ ແລະຟັງຄວາມພຣະເຈົ້າ. ພວກເຮົາຕ້ອງອະທິຖານເຖິງພຣະເຢຊູຢ່າງທີ່ພໍ່ຂອງເດັກນ້ອຍທີ່ຜີເຂົ້ານັ້ນ, " ເຊື່ອແລ້ວຂ້ານ້ອຍ, ທີ່ຂ້ານ້ອຍຍັງຂາດຄວາມເຊື່ອນັ້ນ ຂໍໂຜດຊ່ອຍຂ້ານ້ອຍແດ່ທ້ອນ."

## 3. <u>ທ່ານໄດ້ວາງໃຈໃນການຊ່ອຍເຫລືອຂອງພຣະເຈົ້າ ບໍ່?</u> ( ພບຍ 1:29-33 )

"ຢ່າຕົກໃຈ ແລະຢ່າຢ້ານກົວພວກເຂົາ !" ໂມເຊໄດ້ຕັກເຕືອນພວກເຂົາແຕ່ບໍ່ໄດ້ຜົນ. ເພິ່ນໄດ້ລົ້ມຄືນເຖິງການທີ່ເພິ່ນໄດ້ຕັກເຕືອນເຂົາຢ່າງແຂງແຮງໃຫ້ເຂົາຖິ້ມຄວາມຢ້ານກົວຂອງເຂົາເສັຽ, ໃຫ້ເຂົາເອົາຊະນະການຂາດຄວາມໄວ້ວາງໃຈຕໍ່ພຣະເຈົ້າຂອງພວກເຂົາເສັຽ. ເພິ່ນໄດ້ຕັກເຕືອນພວກອິສຣະເອັນວ່າຣິດອຳນາດຂອງພຣະເຈົ້າທີ່ໄດ້ສະແດງອອກມາໃນການນຳເຂົາອອກມາຈາກການເປັນຂ້າທາດຂອງພວກເອຢິບ: **" ພຣະເຈົ້າໄດ້ຊົງອູ້ມເອົາພວກທ່ານ."** ໂມເຊໄດ້ວາດພາບໃຫ້ເຫັນທັມມະຊາດອັນແທ້ຂອງພຣະເຈົ້າ, ເພື່ອສົມທຽບຄວາມເອົາໃຈໃສ່ຂອງພຣະອົງຕໍ່ອິສຣາເອັນດັ່ງດຽວກັນກັບພໍ່ຄົນນຶ່ງ ທີ່ໄດ້ອູ້ມເອົາລູກຊາຍຂອງຕົນຜ່ານຄວາມອຶບເອົ້າຂອງທະເລຊາຍຢ່າງປອດພັຍ. ເຖິງແມ່ນຈະມີຄວາມພະຍາຍາມຢ່າງຫນ້າສັຣເສີນກໍຕາມ, ແຕ່ຊາວອິສຣາເອັນໄດ້ລົ້ມເຫລວໃນການໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າຊຶ່ງເປັນພຣະເຈົ້າຂອງພວກເຂົາ. ພວກເຂົາໄດ້ຍອມອ່ອນຂໍ້ໃຫ້ກັບຄວາມຢ້ານກົວຂອງພວກເຂົາ.

ເມື່ອພວກເຮົາປະສົບກັບຄວາມຫຽຸງຍາກ ຫລືວ່າເຕັມໄປດ້ວຍຄວາມຢ້ານກົວນັ້ນມັນເປັນການງ່າຍຫລາຍທີ່ພວກເຮົາຈະຕົກເຂົ້າໃນຄວາມບາບຂອງຄວາມບໍ່ໄວ້ວາງໃຈ. ປຽບດັ່ງຄຳເວົ້າຂອງໂມເຊເພື່ອໃຫ້ກຳລັງໃຈນັ້ນໄດ້ຕົກໃສ່ຫູທີ່ບໍ່ຍອມຟັງຂອງພວກເຂົາ, ພວກເຮົາອາດວາງເສີຍ, ບໍ່ເອົາໃຈໃສ່ຕໍ່ການໄດ້ຍິນພຣະຄຳຂອງພຣະເຈົ້າໂດຍຜ່ານທາງຂອງພຣະຄັມພີ, ເພື່ອນຄຣິສຕຽນ, ແລະຄຳເທສນາ.

ໃນຄາວຫມົດກຳລັງໃຈນັ້ນ, ພວກເຮົາໄດ້ຢືນຢູ່ບົນຂອບແຫ່ງຄວາມບໍ່ຟັງຄວາມ. ຄວາມສົນໃຈຂອງເຮົາກໍເລີ້ມອອກຫ່າງຈາກພຣະເຈົ້າໄປ. ພວກເຮົາໄດ້ຫລົງລືມຈາກເສັ້ນທາງເດີນຂອງພຣະອົງ. ພວກເຮົາບໍ່ຈົດຈຳຣິດອຳນາດຂອງພຣະອົງທີ່ໄດ້ສະແດງໃຫ້ເຫັນແລ້ວຕັ້ງຫລາຍໆເທື່ອໃນຊີວິດຂອງພວກເຮົາ ແລະຂອງຄົນອື່ນໆໃນອະດີດທີ່ຜ່ານມາ. ຄວາມຫມົດກຳລັງໃຈສາມາດເຮັດໃຫ້ຄວາມໄວ້ວາງໃຈແຕກສລາຍໄປ. ໃນເວລາເຊັ່ນນີ້, ມີພຽງຄວາມໄວ້ວາງໃຈທີ່ເຂັ້ມແຂງຕໍ່ຄວາມດີ, ຣິດອຳນາດ, ແລະຄວາມຮັກຂອງພຣະເຈົ້າເທົ່ານັ້ນຈຶ່ງຈະຊ່ອຍເຮົາໄດ້. ຖ້າພວກເຮົາຍອມຕໍ່ການທົດລອງ, ການພິພາກສາ ແລະການລົງວິນັຍຂອງພຣະເຈົ້າຈະມາເຖິງເຮົາໃນທັນທີ. ພວກອິສຣະເອັນທີ່ຂີ້ຢ້ານໄດ້ປະສົບກັບສະພາບການດັ່ງນີ້.

## 4. <u>ທ່ານໄດ້ຂັດຂືນຕໍ່ພຣະບັນຊາຂອງພຣະເຈົ້າບໍ່?</u> ( ພບຍ 1:42-46 )

ການຈົ່ມວ່າ, ການຂັດຂືນ, ແລະການບໍ່ຍອມຟັງຄວາມພຣະເຈົ້າຂອງພວກອິສຣາເອັນໄດ້ນຳພາພວກເຂົາໄປສູ່ການພິພາກສາໃນທັນທີ. ພຣະເຈົ້າໄດ້ປະກາດວ່າ, "ໃນຍຸກຮ້າຍນີ້, ຈະບໍ່ມີຈັກຄົນໄດ້ເຫັນແຜ່ນດິນດີທີ່ເຮົາສັນຍາວ່າຈະມອບໃຫ້ພໍ່ຂອງພວກເຂົາ" ( ພບຍ 1:35 ). ມີພຽງແຕ່ນັກສືບສອດແນມ ຄາເລັບແລະໂຢຊວຍເທົ່ານັ້ນທີ່ໄດ້ລາຍງານຄວາມຈິງທີ່ເປັນກຳລັງໃຈໃຫ້ຊາວອິສຣາເອັນໄດ້ຟັງຄວາມພຣະເຈົ້າ, ຈະໄດ້ພົ້ນຈາກຊາຕາກັມອັນນີ້." ເມື່ອພວກອິສຣາເອັນໄດ້ຍິນຄຳທີ່ພຣະເຈົ້າວ່າ, **"ເຮົາຈະບໍ່ສະຖິດຢູ່ນຳພວກເຈົ້າ"** ພວກເຂົາກໍໄດ້ຫລົບຖິ້ມໃຈເກົ່າເອົາໃຈໃຫມ່ໃນທັນທີ. ພຣະເຈົ້າໄດ້ໃຫ້ອະພັຍພວກເຂົາ, ແຕ່ວ່າຜົນສະທ້ອນແຫ່ງຄວາມບາບຂອງເຂົາບໍ່ໄດ້ຖືກລຶບອອກໄປ. ອິສຣາເອັນໄດ້ສະສົມເອົາຄວາມບໍ່ຟັງຄວາມອັນເກົ່າ ໄດ້ພະຍາຍາມຈະເຂົ້າໄປໃນແຜ່ນດິນນັ້ນ. ຊ້າເກີນໄປເສັຽແລ້ວ !

ດ້ວຍປາສຈາກການນຳພາ ແລະຣິດອຳນາດຂອງພຣະເຈົ້າແລ້ວ, ພວກເຂົາໄດ້ພົບກັບຄວາມປຣາຊັຍອັນຂົມຂື່ນຈາກນ້ຳມືຂອງພວກອາໂມໄຣ.

ພວກທ່ານເຄີຍໄດ້ສັງເກດເບິ່ງຄຣິສຕະຈັກທີ່ເປິເປື້ອນດ້ວຍຄວາມບໍ່ລົງຮອຍກັນ, ແລະວິວາດກັນບໍ່? ຈົ່ງສັງເກດວ່າບາງເທື່ອຄຣິສຕະຈັກດັ່ງກ່າວໄດ້ຕັ້ງຢູ່ໃນສະຖານທີ່ງມີສະພາບເອື້ອອຳນວຍຕໍ່ການຂຍາຍຕົວໃນການປະກາດ. ຍັງມີບາງຄຣິສຕະຈັກ ທີ່ມີໂອກາດນ້ອຍກວ່າໄດ້ນຳຄົນມາຫາພຣະເຈົ້າໄດ້ຫລາຍກວ່າຄຣິຕະສຈັກທີ່ເປັນປົຣະປັກຕໍ່ພຣະບັນຊາຂອງພຣະເຈົ້າຊຶ່ງໃຫ້ຮັກກັນແລະກັນໄດ້ມີຄວາມແປກໃຈວ່າ ເປັນດ້ວຍເຫດໃດພວກເຂົາຈຶ່ງຂາດຄຸນນະພາບ.

ສະພາບແບບນີ້ສາມາດເກີດຂຶ້ນກັບຊີວິດຂອງພວກເຮົາເອງ ເມື່ອເຮົາຫາກດື້ດຶງກັບແຜນການຂອງພຣະເຈົ້າ ແລະໄດ້ເລືອກເອົາທາງຂອງເຮົາເອງ ມັນເປັນເຫດໃຫ້ເຮົາຂາດພຣະພອນຈາກພຣະເຈົ້າທີ່ພຣະອົງມີໄວ້ສຳລັບພວກເຮົາ. ເຊັ່ນດຽວກັບພວກທີ່ຫລົງທາງໃນທະເລຊາຍພວກເຂົາກໍຍັງເປັນຂອງພຣະເຈົ້າຢູ່, ພວກເຮົາກໍເຫມືອນກັນ, ຖ້າພວກເຮົາຫາກເປັນຄຣິສຕຽນແທ້ນັ້ນ, ພວກເຮົາຈະບໍ່ໄດ້ຖືກແຍກອອກຈາກພຣະເຈົ້າໄປຈັກເທື່ອ. ແຕ່ວ່າພວກເຮົາຈະບໍ່ໄດ້ຮັບພຣະພອນຄືແຜ່ນດິນແຫ່ງພຣະສັນຍາທີ່ພຣະອົງວ່າຈະໃຫ້ພວກເຮົານັ້ນ.

"ສະນັ້ນພວກເຮົາຈຶ່ງໄດ້ອາສັຍຢູ່ທີ່ເມືອງກາເດສເປັນເວລານານ." ຄຳວ່າ ກາເດສ ແປວ່າ ທຳໃຫ້ສັກສິດ. ມັນເປັນການຜິດທັມມະດາແທ້ໆທີ່ວ່າ ບ່ອນສັກສິດໄດ້ກາຍເປັນສັນຍາລັກແຫ່ງຄວາມຜ່າຍແພ້ຝ່າຍວິນຍານຂອງຊາວອິສຣາເອັນທີ່ຕ້ອງພັກຢູ່ທີ່ນັ້ນດົນເພື່ອເຮັດໃຫ້ສັກສິດ ຊຶ່ງຖືໄດ້ວ່າເຄື່ອງຫມາຍສະແດງເຖິງພວກເຂົາໄດ້ຕິດຕົມຝ່າຍວິນຍານນະທີ່ນັ້ນ.

ທຸກວັນນີ້ ຫລາຍເທື່ອທີ່ຄົນເອີ້ນຕົນເອງວ່າເປັນຄຣິສຕຽນໄດ້ປະຕິເສດທີ່ຈະນັບຖືຄຳສັ່ງຂອງພຣະເຈົ້າ. ພວກເຮົາຕ້ອງຮູ້ຈັກວ່າເຖິງແມ່ນພວກເຮົາໄດ້ສາຣະພາບຄວາມຜິດບາບ ແລະໄດ້ຮັບການອະພັຍແລ້ວກໍຕາມ, ຜົນບາງປະການຂອງຄວາມບາບຍັງຄົງຄ້າງໄວ້ຢູ່. ພຣະເຈົ້າຍັງອວຍພຣະພອນ ແລະຊົງໃຊ້ຜູ້ທີ່ໄດ້ຖືກອະພັຍແລ້ວ, ແຕ່ວ່າຄວາມໃຊ້ການບໍ່ໄດ້, ແລະພຣະພອນນັ້ນອາດຈະແຕກຕ່າງຈາກເຮົາໄດ້ຕໍ່ສູ້ກັບການທົດລອງ ແລະຍັງສັດຊື່ຕໍ່ພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.